## ບົດທີ 13

# ຄຳອຸປະມາເລື່ອງສາວປອດສິບຄົນ

*ຮູບຂ້າງລຸ່ມນີ້ສະແດງເຖິງຄຳອຸປະມາສາມປະການໃນມັດທາຍບົດ 25. ຖ້າທ່ານຮຽນໄປເຖິງບົດທີ 15 ທ່ານຈະຮູ້ຈັກເລື່ອງໃນຄຳອຸປະມາເຫຼົ່ານັ້ນຢ່າງລະອຽດດີ.*

**ຄຳເທດສະໜາຈາກພູໝາກກອກເທດ ພາກປາຍໃນມັດທາຍບົດ 25**

| | |
|---|---|
| 1 . <br> - - - - - - - - - - - - - - - - <br> ມທ 25 : ______ - ________ |  |
| 2 . <br> - - - - - - - - - - - - - - - - <br> ມທ 25 : ______ - ________ |  |
| 3 . <br> - - - - - - - - - - - - - - - - <br> ມທ 25 : ______ - ________ |  |

**1** ທ່ານຮູ້ຈັກຫົວຂໍ້ຂອງຄຳອຸປະມາເຫຼົ່ານັ້ນ

ກ. ໃນ ມທ 25:1 ແມ່ນຫຍັງທີ່ຍົກມາປຽບເໝືອນສາວປອດສິບຄົນນັ້ນ? ______________

ຂ. ແລະແມ່ນຫຍັງທີ່ຍົກມາປຽບທຽບໃນຄຳອຸປະມາເລື່ອງເງິນຕາລັນຕົນ? (ຂໍ້ 14)

________________________________________________

ຄ. ຫົວຂໍ້ "ການຊົງພິພາກສາບັນດາປະຊາຊາດ" ບໍ່ແມ່ນຄຳອຸປະມາຕະຫຼອດໝົດແຕ່ມີຄຳອຸປະມາຮ່ວມຢູ່ນຳເລື່ອງ ຝູງແກະແລະຝູງແບ້. ຕັ້ງແຕ່ຂໍ້ 31 ເຖິງຂໍ້ 46 ເຫັນຄຳທີ່ອ້າງເຖິງກະສັດຫຼາຍເທື່ອຊຶ່ງກະສັດນັ້ນເປັນພະເຈົ້າ. ດັ່ງນັ້ນເຫັນວ່າໝົດເລື່ອງນັ້ນອ້າງເຖິງອານາຈັກໃດ? ________________________________________

**2** ກ. ວັນອັງຄານນັ້ນເລີ້ມຕົ້ນດ້ວຍການໂຕ້ຖຽງກັນລະຫວ່າງພະເຢຊູກັບພວກຜູ້ນຳໃນພະວິຫານ. ໃນບ່ອນນັ້ນພະເຢຊູ ຍົກຄຳອຸປະມາສາມປະການເລື່ອງອານາຈັກໃດ? ____________

ຂ. ຕອນແລງໃນວັນອັງຄານນັ້ນພະເຢຊູເທດສະໜາຢູ່ພູໝາກກອກເທດແລ້ວຍົກຄຳອຸປະມາອີກສາມປະການເລື່ອງ ອານາຈັກໃດ? ________________________________



ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳ "ລາຊະອານາຈັກສະຫວັນ" ໃນ ມທ 25:1, ກ້ອງຄຳ "ພະທີ່ນັ່ງ" ໃນຂໍ້ 32 ແລະກ້ອງຄຳ "ກະສັດ" ໃນຂໍ້ 34 ແລະ 40. ແລະອີກໃຫ້ຂຽນຄຳ "ລາຊະອານາຈັກສະຫວັນ" ເຖິງຄຳ "ຍັງ" ໃນຂໍ້ 14 ດ້ວຍ.

**3** ຕໍ່ໄປນີ້ ເຮົາຈະຮຽນເລື່ອງຄຳອຸປະມາທຳອິດໃນມັດທາຍ ບົດທີ 25.

ກ. ຈະຮຽນເລື່ອງຄຳອຸປະມາໃດກ່ອນ? ________________________________

ຂ. ໃນມັດທາຍບົດທີ 25 ຂໍ້ໃດເຖິງຂໍ້ໃດ? ________________________________

**4** ໃຫ້ທ່ານອ່ານຄຳອຸປະມານັ້ນທັງໝົດ. ເລື່ອງໃນຄຳອຸປະມານີ້ຟັງຄືແປກປະຫຼາດແທ້ ເພາະຊີວິດຄອງຂອງຊາດຢິວໃນສະ ໄໝນັ້ນແຕກຕ່າງກັນກັບຊີວິດຄອງລາວໃນປະຈຸບັນນີ້ຫຼາຍ. ເປັນຫຍັງຄຳອຸປະມາເລື່ອງສາວປອດສິບຄົນນັ້ນຟັງຄືແປກ ປະຫຼາດແທ້ (ເລືອກ)

ກ. ເພາະມັດທາຍບໍ່ຮູ້ລະອຽດ.

ຂ. ເພາະພະເຢຊູເຂົ້າໃຈຜິດເລື່ອງຊີວິດຄອງກິນດອງຂອງຊາດຢິວໃນສະໄໝນັ້ນ.

ຄ. ເພາະຊີວິດຄອງຢິວສະໄໝນັ້ນຕ່າງກັນກັບຊີວິດຄອງລາວໃນສະໄໝນີ້ຫຼາຍ.

*ເພື່ອຈະເຂົ້າໃຈຄຳອຸປະມານີ້ໄດ້ດີ, ເຮົາຈະສຶກສາເລື່ອງປະເພນີການແຕ່ງງານຂອງຊາວຢິວໃນສະໄໝ ພະເຢຊູນັ້ນ.*

**5** ຕາມທຳມະດາຊາວຢິວໃນປະເທດປາແລັດສະຕິນໃນສະໄໝພະເຢຊູ ເຄີຍຈັດການແຕ່ງງານໃນເວລາກາງຄືນ. ຝ່າຍ ເຈົ້າບ່າວສວມໝວກທີ່ຄ້າຍຄືກັນກັບມົງກຸດ, ເຈົ້າບ່າວນັ້ນຈະມາເຖິງເຮືອນຂອງເຈົ້າສາວໃນເວລາກາງຄືນແຕ່ບໍ່ມີໃຜຮູ້ໂມງທີ່ຈະມາ. ເຈົ້າສາວຕ້ອງຕຽມຕົວພ້ອມຢູ່ສະເໝີ ໃນທັນໃດເຈົ້າສາວກັບເພື່ອນໄດ້ຍິນຄວາມວ່າ "ເຈົ້າບ່າວມາແລ້ວ" ທັງເຈົ້າສາວແລະເພື່ອນກໍອອກໄປຕ້ອນຮັບເຈົ້າບ່າວມາ.

ກ. ຕາມຮີດຄອງຍິວໃນສະໄໝນັ້ນ ເຂົາເຮັດພິທີແຕ່ງງານໃນເວລາໃດ? (ເລືອກ)

______ ຕອນບ່າຍ ______ ຕອນເຊົ້າ ______ ຕອນກາງຄືນ

ຂ. ເພື່ອຈະເລີ້ມຕົ້ນພິທີນັ້ນເຈົ້າບ່າວເຮັດຫຍັງກ່ອນ? (ເລືອກ)

______ ຝາກຈົດໝາຍໄປກ່ອນ

______ ມາເຮືອນເຈົ້າສາວແຕ່ກາງຄືນ ແຕ່ບໍ່ນັດໂມງໄວ້ກ່ອນ

______ ລໍຖ້າຢູ່ບ້ານຈົນກວ່າເຈົ້າສາວຈະມາຫາ.

ຄ. ເມື່ອເຈົ້າບ່າວມາແລ້ວ ເຈົ້າສາວກຳລັງເຮັດຫຍັງ? (ເລືອກ)

______ ຢູ່ທີ່ອື່ນ ______ ຕຽມພ້ອມລໍຖ້າ ______ ທຳຄວາມສະອາດ

**6** ເຂົາແຕ່ງພິທີສາດສະໜາຢູ່ໃນເຮືອນຂອງເຈົ້າສາວກ່ອນແລ້ວທັງສອງນຳໜ້າຂະບວນໄປບ້ານຂອງເຈົ້າບ່າວ. ຜູ້ໃດທີ່ ຈະດັນຂະບວນກັບເຂົາຈຳເປັນຕ້ອງຖືໂຄມໄປພ້ອມເພື່ອສ່ອງແສງສະຫວ່າງທາງທີ່ເຂົາໄປ. ຜູ້ໃດບໍ່ມີໂຄມບໍ່ມີສິດຮ່ວມ ນຳທັງເຂົ້າຮ່ວມກິນດອງໃນເຮືອນຂອງເຈົ້າບ່າວບໍ່ໄດ້.

ກ. ເຂົາເຮັດພິທີແຕ່ງງານດ້ານສາດສະໜາຢູ່ໃສ?

1. ໃນໂຮງທຳ.
2. ໃນຫ້ອງການເຈົ້າເມືອງ.
3. ໃນພະວິຫານ.
4. ໃນເຮືອນເຈົ້າບ່າວ.
5. ໃນເຮືອນເຈົ້າສາວ.

ຂ. ຕໍ່ໄປເຂົາຈະເດີນຂະບວນທີ່

1. ຕິດຕາມເຂົາໄປເຮືອນເຈົ້າບ່າວ.
2. ປະກອບໂດຍແຕ່ສະເພາະຄົນທີ່ຖືໂຄມໄປນຳ.
3. ຫ້າມບໍ່ໃຫ້ເຂົ້າເຮືອນເຈົ້າສາວ.
4. ລໍຖ້າໃນເຮືອນເຈົ້າສາວໝົດຄືນ.
5. ຍ່າງໄປໃນຄວາມມືດເພາະຢ້ານຜີ.



ຄ. ໃນເຮືອນເຈົ້າບ່າວມີການລ້ຽງສະເພາະເພື່ອໃຜ?

1. ເພື່ອຄົນທີ່ມີໂຄມໄຕ້ພ້ອມ.
2. ເພື່ອຄອບຄົວຂອງເຈົ້າສາວແລະເຈົ້າບ່າວ.
3. ເພື່ອເຈົ້າບ່າວກັບເຈົ້າສາວເອງ.

**7** ກ. ເຂົາເຮັດພິທີສາດສະໜາຢູ່ໃສ? ______________________________

ຂ. ການລ້ຽງຢູ່ໃສ? ______________________________

ຄ. ທຸກຄົນທີ່ເດີນຂະບວນ ຕ້ອງມີຫຍັງໄປພ້ອມ? ______________________________

**8** ໃຫ້ເຮົາຮຽນຄືນອີກ.

ກ. ຊາດຢິວໃນສະໄໝນັ້ນເຄີຍເຮັດພິທີແຕ່ງງານໃນຍາມໃດ? ____________________

ຂ. ເລີ້ມຕົ້ນຢູ່ໃນເຮືອນໃຜ? ____________________

ຄ. ສິ້ນສຸດລົງໃນເຮືອນໃຜ? ____________________

ງ. ເຈົ້າບ່າວຈະມາເຖິງເຮືອນເຈົ້າສາວໃນໂມງໃດ? ____________________

ຈ. ໃນເວລາທ່ຽງຄືນມີສຽງຮ້ອງວ່າໃຜມາແລ້ວ? ____________________

ສ. ແມ່ນໃຜລໍຖ້າຕຽມຕົວພ້ອມ? ____________________

ຊ. ມີສາວປອດຈັກຄົນເປັນເພື່ອນເຈົ້າສາວ? ____________________

ຍ. ເຂົາຈະເຂົ້າເຮືອນເຈົ້າສາວເພື່ອເຮັດພິທີດ້ານໃດ? ____________________

ດ. ເຂົາພາກັນເດີນຂະບວນເຖິງເຮືອນໃຜ? ____________________

ຕ. ໃນເຮືອນເຈົ້າບ່າວມີການຫຍັງ? ____________________

ຖ. ທຸກຄົນທີ່ເດີນຂະບວນແລະຮ່ວມໃນພິທີຕ້ອງຖືຫຍັງພ້ອມ? ____________________

*ຖ້າເຮົາຮູ້ຈັກເລື່ອງຮີດຄອງປະເພນີຢ່າງນັ້ນ ເຮົາອາດຈະເຂົ້າໃຈເລື່ອງຄຳອຸປະມານີ້ໄດ້ດີ.*

**9** ໃຫ້ອ່ານ ມທ 25:1-6 ອີກ.

ກ. ແມ່ນໃຜທີ່ລໍຖ້າເຈົ້າບ່າວພ້ອມດ້ວຍກັບເຈົ້າສາວ? ____________________

ຂ. ເຖິງມີສາວປອດ 10 ຄົນຢູ່ດ້ວຍກັນກໍຕາມ ແຕ່ພະເຢຊູແບ່ງເຂົາເປັນສອງພວກຄື ສອງພວກໃດ? ____________________ ____________________

ຄ. ຄົນສະຫຼາດ 5 ຄົນ ສະແດງຄວາມສະຫຼາດຢ່າງໃດ? ____________________

ງ. ຄົນໂງ່ 5 ຄົນ ສະແດງຄວາມໂງ່ຢ່າງໃດ? ____________________

ຈ. ເປັນຫຍັງເຂົາທັງສິບຈຶ່ງຫຼັບໄປ? ____________________

ສ. ເວລາທ່ຽງຄືນເຂົາໄດ້ຍິນສຽງຫຍັງ? ____________________

**10** ໃຫ້ອ່ານ ມທ 25:7-13

ກ. ຫຼັງຈາກເຂົາຕື່ນແລ້ວ ໂຄມຂອງພວກໃດດັບໄປ? ____________________

ຂ. ເປັນຫຍັງຈຶ່ງດັບໄປ? ____________________

ຄ. ພວກຄົນໂງ່ຈຳເປັນຕ້ອງໄປໃສ? ____________________

ງ. ເມື່ອເຂົາບໍ່ຢູ່ ແມ່ນໃຜມາ? ____________________

ຈ. ຄົນໂງ່ທັງ 5 ຄົນກັບມາແລ້ວເຂົາເຂົ້າໄດ້ບໍ່? ____________________

**11** ໃຫ້ທ່ານຂີດ √ ໃສ່ຄຳໃດທີ່ຖືກ.

ກ. ______ ສາວປອດທັງ 10 ຄົນລໍຖ້າວ່າເຈົ້າບ່າວຈະມາ.

ຂ. ______ 5 ຄົນເຂົ້າເຮືອນບໍ່ໄດ້ເພາະເມື່ອເຈົ້າບ່າວມາແລ້ວເຂົາບໍ່ຕຽມຕົວພ້ອມ.

ຄ. ______ ມີແຕ່ຄົນໂງ່ເຂົ້າໄດ້.

**12** ບັດນີ້ ທ່ານຮູ້ເລື່ອງຮີດຄອງການແຕ່ງງານໃນປະເທດປາແລັດສະຕິນໃນສະໄໝພະເຢຊູ. ທ່ານກໍອາດຈະເຂົ້າໃຈສາເຫດ ທີ່ສາວປອດສະຫຼາດມີສິດເຂົ້າໄດ້ ແຕ່ສາວປອດໂງ່ບໍ່ມີສິດເຂົ້າ. ມີແຕ່ສາວປອດຜູ້ສະຫຼາດເຂົ້າໄດ້ ເພາະເຂົາເອົາຫຍັງມາ? ___________________________

**13** ໃນຫຼັກສູດກ່ອນນັ້ນທ່ານໄດ້ຮຽນວິທີຕີຄວາມໝາຍໃນຄຳອຸປະມາ.

ກ. ຖ້າຈະຕີຄວາມໝາຍຢ່າງຖືກຕ້ອງເຮົາຄວນຍົກຄວາມໝາຍມາຈາກໃສ? (ເລືອກ)

______ ລາຍລະອຽດທຸກປະການ.

______ ຈຸດສຳຄັນ.

______ ສິ່ງໃດກໍໄດ້ທີ່ຜູ້ຮຽນຢາກຍົກມາ.



ຂ. ແມ່ນຄຳໃດຕໍ່ໄປນີ້ທີ່ຈະຖືວ່າເປັນຈຸດສຳຄັນໃນຄຳອຸປະມາເລື່ອງສາວປອດສິບຄົນ? (ເລືອກ)

______ ເຮົາທຸກຄົນຄວນຮັກສາຊັບທຳມະຊາດເປັນຕົ້ນນ້ຳມັນ.

______ ເຮົາຄວນຈະຕຽມຕົວພ້ອມຈົນກວ່າບຸດມະນຸດສະເດັດມາອີກ.

______ ຄວນຈັດພິທີແຕ່ງງານໃນກາງເວັນ ເພື່ອບໍ່ຕ້ອງໃຊ້ໂຄມ.

**14** ກ. ໃຫ້ທ່ານຍົກ ມັດທາຍ 25:5-6 ມາປຽບທຽບກັບຂໍ້ 13. ທີ່ພວກສາວປອດບໍ່ຮູ້ໂມງທີ່ເຈົ້າບ່າວຈະມາ ເຊັ່ນດຽວກັນ ພວກຄຣິດສະຕຽນບໍ່ຮູ້ __________ ທີ່ບຸດມະນຸດ ຈະມາ (ຕື່ມຄວາມ)

ຂ. ບຸດມະນຸດນັ້ນຄືໃຜ? ____________________________________________________

**15** ກ. ເບິ່ງຄືເຈົ້າບ່າວນັ້ນປຽບເໝືອນໃຜ? ______________________________________

ຂ. ທີ່ເຈົ້າບ່າວມາແລ້ວປຽບເຖິງເຫດການໃດ? ___________________________________

**16** ເຈົ້າບ່າວປຽບທຽບພະເຢຊູ ດັ່ງນັ້ນສາວປອດສິບຄົນຈະປຽບທຽບໃຜ? (ເລືອກ)

ກ. ພວກຟາລິຊາຍ. ຂ. ຜູ້ທີ່ຮ່ວມກັບພວກຊາດູກາຍ.

ຄ. ຜູ້ທີ່ມີຊື່ວ່າເປັນຄຣິດສະຕຽນທັງໝົດ ງ. ຜູ້ທີ່ບໍ່ເຊື່ອໃນພະເຢຊູ.

**17** ສາວປອດສິບຄົນນັ້ນປຽບທຽບກັບສະມາຊິກທຸກຄົນໃນຄຣິດສະຕະຈັກໃນຍຸກພະເຢຊູຈະສະເດັດມາ. ແຕ່ເປັນຫຍັງວ່າ ມີແຕ່ 5 ຄົນເຂົ້າໄດ້ ອີກ 5 ຄົນເຂົ້າບໍ່ໄດ້. (ເລືອກ)

ກ. ມີບາງຄົນທີ່ເຂົ້າເປັນສະມາຊິກໃນຄຣິດສະຕະຈັກແຕ່ທີ່ຈິງເຂົາບໍ່ໄດ້ໄວ້ວາງໃຈໃນພະເຢຊູ ເຂົາຈຶ່ງເຂົ້າບໍ່ໄດ້.

ຂ. ຟ້າສະຫວັນໃຫຍ່ບໍ່ພໍທີ່ຈະຮັບຄຣິດສະຕຽນທຸກຄົນຈຶ່ງມີແຕ່ຄຣິດສະຕຽນທີ່ດີແທ້ໆ ເຂົ້າໄດ້.

ຄ. ມີແຕ່ຜູ້ທີ່ຮັບສິນເຂົ້າໄດ້.

**18** ຄຳອຸປະມາເລື່ອງສາວປອດສິບຄົນສອນໄວ້ວ່າ ຜູ້ທີ່ເຊື່ອໄວ້ວາງໃຈກັບພະອົງຈິງ _______ ຕົວ _______ ຢູ່ສະເໝີ ເພາະການສະເດັດ ________ ຂອງບຸດ _________ ມາໃກ້. (ຕື່ມຄວາມ)

**19** ກ. ໃນມັດທາຍ 25:3 ເຫັນວ່າສາວປອດຄົນໂງ່ບໍ່ໄດ້ຕຽມພ້ອມ ເພາະບໍ່ໄດ້ເອົາຫຍັງໄປ? ___
ຂ. ສາວປອດຄົນສະຫຼາດຕຽມຕົວພ້ອມທີ່ຈະຕ້ອນຮັບເຈົ້າບ່າວດ້ວຍເຮັດຫຍັງ? ________

**20** ເຫັນຫຼາຍເທື່ອໃນພະຄຳພີຄຳວ່າ ນ້ຳມັນທີ່ໃຊ້ໃນພິທີທົດສິ່ງເປັນສັນຍາລັກຂອງພະວິນຍານບໍລິສຸດ. ໃຫ້ທ່ານເປີດ ອ່ານລູກາ 4:18 ກຈກ 10:38 2 ໂກລິນໂທ 1:21-22 ຖ້ານ້ຳມັນໝາຍເຖິງພະວິນຍານບໍລິສຸດສາວປອດທີ່ ບໍ່ມີນ້ຳ ມັນອາດຈະປຽບທຽບຫຍັງ? (ເລືອກ)
ກ. ຄຼິດສະຕຽນທີ່ມີກຳບໍ່ພໍທີ່ຈະເຂົ້າສະຫວັນໄດ້.
ຂ. ຜູ້ທີ່ເອົາແຕ່ຊື່ຄຼິດສະຕຽນແຕ່ທີ່ຈິງບໍ່ມີພະວິນຍານໃນຈິດໃຈ.
ຄ. ຄຼິດສະຕຽນທີ່ຂາດບໍ່ໄປປະຊຸມເປັນບາງເທື່ອ.
ງ. ຜູ້ທີ່ເຂົ້າສາດສະໜາຄຼິດທຸກຄົນ

**21** ສາວປອດຄົນໂງ່ນັ້ນປຽບທຽບກັບຄົນທີ່ອາດຈະເອົາຊື່ວ່າເປັນຄຼິດສະຕຽນອາດຈະເກີດມາຈາກພໍ່ແມ່ທີ່ເປັນຄຼິດສະ ຕຽນແຕ່ເຂົາຂາດຫຍັງ? ________________________________

**22** ໃນໂລມ 8:9 ອາຈານໂປໂລບອກວ່າ:

*...ຖ້າຜູ້ໃດບໍ່ມີພະວິນຍານຂອງພະຄຼິດຜູ້ນັ້ນກໍບໍ່ເປັນຂອງພະອົງ ຄືວ່າພະເຢຊູບໍ່ຮັບຮູ້ຜູ້ນັ້ນ.*

ກ. ຜູ້ທີ່ບໍ່ເປັນຂອງພະອົງຂາດຫຍັງ? ____________________________________
ຂ. ພະເຢຊູຮັບຮູ້ຄົນທີ່ບໍ່ມີພະວິນຍານບໍ່? ________________________________
ຄ. ໃນ ມທ 25:12 ເຈົ້າພາບບອກສາວປອດຄົນບໍ່ມີນ້ຳມັນວ່າຢ່າງໃດ? _____________

________________________________________________________

ງ. ໃນວັນທີ່ພະອົງສະເດັດມາ ພະອົງຈະຮັບຮູ້ຄົນທີ່ເອົາຊື່ຄຼິດສະຕຽນແຕ່ບໍ່ມີພະວິນຍານບໍ່?

________________________________________________________

ຈ. ຄົນຢ່າງນັ້ນຈະເຂົ້າແຜ່ນດິນສະຫວັນໄດ້ບໍ່? ______________________________

**23** ກ. ຄຳອຸປະມາເລື່ອງສາວປອດສິບຄົນສອນເຮົາວ່າຜູ້ທີ່ເຊື່ອໄວ້ວາງໃຈໃນພະອົງຈິ່ງເຮັດຢ່າງໃດ? ________________________________________________________
ຂ. ເພາະເຫດໃດ? ______________________________________________

**24** ໃຫ້ອ່ານ ມັດທາຍ 25:8-9 ປະໂຫຍກໃດຕໍ່ໄປນີ້ທີ່ຖືກ? (ເລືອກ)
ກ. "ອ້າຍຂອງຂ້ອຍເປັນຜູ້ປົກຄອງໃນຄຼິດສະຕະຈັກດັ່ງນັ້ນຂ້ອຍຈະເຂົ້າສະຫວັນແນ່."
ຂ. "ການໄວ້ວາງໃຈກັບພະອົງເປັນເລື່ອງຂອງບຸກຄົນບໍ່ແມ່ນສິ່ງທີ່ເຮົາຈະຮັບມາຈາກພໍ່ແມ່."
ຄ. "ເຮົາຈະຮັບພະວິນຍານໂດຍການຮັບສິນບັບຕິສະມາແລະໄປປະຊຸມ."

**25** (ໃຫ້ທ່ານຕື່ມຄວາມທີ່ຂາດຕໍ່ໄປນີ້) ຕາມທີ່ເຮົາຮຽນມາແລ້ວ ຜູ້ໃດທີ່ຕຽມຕົວພ້ອມທີ່ຈະຮັບພະເຢຊູ ຄົນນັ້ນຈະໃຫ້ພະເຢຊູນັ່ງພະ _______ ໃນຈິດໃຈຂອງຕົນຢ່າງເປັນກະ _______ໃນຊີວິດ. ຄົນນັ້ນຈະມີພະ ___________ ບໍ _______ ພ້ອມທີ່ຈະຮັບການ ສະ ____________ ຂອງພະ ________________ ແລ້ວມີສິດທີ່ຈະເຂົ້າໃນແຜ່ນດິນ ___________________ ໄດ້.

**26** ໃຫ້ອ່ານ ເຮັບເລີ 9:27. ຖ້າຄົນໃດທີ່ບໍ່ຮັບຮູ້ພະເຢຊູຕາຍໄປຫຼືອາດຈະມີຊີວິດຢູ່ຈົນກວ່າ ພະເຢຊູສະເດັດມາອີກ. ຄົນ ນັ້ນຈະມີໂອກາດຮັບເອົາພະເຢຊູທີຫຼັງບໍ່? _______________

| ໃຫ້ທ່ານຂີດເສັ້ນສີຂຽວກ້ອງເຮັບເລີ 9:27 |
|---|

**27** ໃຫ້ທ່ານເລືອກຄຳທີ່ຖືກດັ່ງຕໍ່ໄປນີ້.

ກ. ເມື່ອພະເຢຊູສະເດັດມາອີກ ພະອົງຈະເປີດໂອກາດໃຫ້ຄົນຮັບພະເຢຊູເປັນພະຜູ້ຊ່ວຍອີກ.

ຂ. ຖ້າເຮົາຕາຍກ່ອນທີ່ພະອົງຈະສະເດັດມາດ້ວຍບໍ່ໄດ້ຮັບເອົາພະເຢຊູເປັນພະຜູ້ຊ່ວຍພະອົງ ຈະເປີດໂອກາດ ໃໝ່ອີກ.

ຄ. ພະອົງຈະບໍ່ພິພາກສາຄົນດອກ.

**28** ຈຸດສຳຄັນທີ່ເຮົາຈະຮຽນໃນຄຳອຸປະມານີ້ຄືຫຍັງ? ______________________________

______________________________________________________________

**29** ແມ່ນຂໍ້ໃດໃນພະທຳເຮັບເລີສອນວ່າບໍ່ມີໂອກາດຮັບພະເຢຊູ ຫຼັງຈາກຄວາມຕາຍກ່ອນການພິ ພາກສາ? ____________________________________________________

**30** ກ. ເຮົາຈະຕຽມຕົວໄວ້ເພື່ອການສະເດັດມາຂອງພະອົງຢ່າງໃດ? ___________________

______________________________________________________________

______________________________________________________________

______________________________________________________________

ຂ. ເປັນຫຍັງເຮົາຈຶ່ງພ້ອມຢູ່ສະເໝີ? ______________________________________

______________________________________________________________

______________________________________________________________

______________________________________________________________

**31** ກ. ແມ່ນຂໍ້ໃດໃນພະຄຳພີທີ່ບອກວ່າບໍ່ມີໃຜຮູ້ວັນແລະໂມງທີ່ພະອົງຈະມານອກຈາກພະບິດາ ເຈົ້າອົງດຽວ?_____________________________________________________

ຂ. ຂໍ້ໃດບອກວ່າ ຫຼັງຈາກເຮົາຕາຍແລ້ວຈະມີການພິພາກສາ? ____________________

**32** ໃນວັນອັງຄານນັ້ນມີເຫດການຫຼາຍປະການ:

ກ. ພະເຢຊູໂຕ້ຖຽງກັບໃຜ? ____________________________________________

ໃນບ່ອນໃດ? _________________________________________________

ຂ. ພະອົງປະນາມສອງພວກໃດ? ________________________________________

ຄ. ແລ້ວເສຍພະໄທຍ້ອນກຸງໃດ? _______________________________________

ງ. ທຳນວາຍເລື່ອງການທຳລາຍຫຍັງ? ____________________________________

ຈ. ແລ້ວເທດສະໜາໃຫ້ພວກລູກສິດຟັງຢູ່ພູໃດ? ______________________________

*ບົດຮຽນນີ້ສິ້ນສຸດລົງແຕ່ທ່ານຈົ່ງຈື່ເລື່ອງນີ້ໄວ້ດີໆ ໃຫ້ທ່ານຈົ່ງຄິດຕໍ່:*

- *ຈົ່ງຄິດເລື່ອງສາວປອດຄົນໂງ່ທີ່ເຫັນໃນຮູບໜ້າປົກບົດນີ້.*
- *ຈົ່ງຄິດເລື່ອງຄວາມໝົດຫວັງທີ່ເຂົາເຫັນປະຕູປິດ ເຂົາຈຶ່ງເຂົ້າບໍ່ໄດ້.*
- *ຈົ່ງຄິດເລື່ອງເພື່ອນຂອງທ່ານທີ່ບໍ່ຮັບຮູ້ພະເຢຊູເທື່ອ. ເມື່ອພະເຢຊູສະເດັດມາອີກເຂົາກໍ່ອາດຈະໝົດຫວັງຍິ່ງໜັກກວ່ານັ້ນ ເພາະເຂົ້າສະຫວັນບໍ່ໄດ້.*
- *ຈົ່ງຄິດເບິ່ງທ່ານຈະເຕືອນເຂົາຢ່າງໃດໄດ້.*

*ໃຫ້ທ່ານຕຽມພ້ອມທີ່ຈະຮັບພິຈາລະນາເລື່ອງນີ້ກັບໝູ່ປະຊຸມຂ້າງໜ້າ.*

*ຈົ່ງເປີດເສັງບົດທີ 13.*

**ຄໍາຕອບ:**

**1** *ກ.ອານາຈັກສະຫວັນ. ຂ.ອານາຈັກສະຫວັນ.*
*ຄ.ອານາຈັກສະຫວັນ. (ອານາຈັກຂອງພະເຈົາກໍໄດ້)*

**2** *ກ.ອານາຈັກສະຫວັນ. ຂ.ອານາຈັກສະຫວັນ.*

**3** *ກ.ສາວປອດສິບຄົນ. ຂ. 1-13.*

**4** *ຄ ຖືກ*

**5** *ກ. ຕອນກາງຄືນ ຂ. ມາເຮືອນເຈົາສາວແຕ່ກາງຄືນ ແຕ່ບໍ່ນັດໂມງໄວ້ກ່ອນ*
*ຄ. ຕຽມພ້ອມລໍຖ້າ*

**6** *ກ. 5 ຖືກ. ຂ. 1 ແລະ 2 ຖືກ. ຄ. 1 ຖືກ.*

**7** *ກ. ເຮືອນຂອງເຈົາສາວ. ຂ. ເຮືອນຂອງເຈົາບ່າວ. ຄ. ໂຄມໄຕ້.*

**8** *ກ. ກາງຄືນ. ຂ. ເຈົາສາວ. ຄ. ເຈົາບ່າວ. ງ. ບໍ່ຮູ້ກ່ອນ. ຈ. ເຈົາບ່າວ.*
*ສ. ເຈົາສາວ. ຊ. 10 ຍ. ສາດສະໜາ. ດ. ເຈົາບ່າວ. ຕ. ການລ້ຽງ.*
*ຖ. ໂຄມໄຕ້.*

**9** *ກ. ສາວປອດສິບຄົນ. ຂ. ຄົນໂງ່ ຄົນສະຫຼາດ. ຄ. ເຂົາເອົານໍ້າມັນໃສ່ກວດ.*
*ງ. ເຂົາບໍ່ໄດ້ເອົານໍ້າມັນໄປນໍາ. ຈ. ເຈົາບ່າວມາຊ້າ. ສ. ຮ້ອງວ່າ "ເຈົາບ່າວມາແລ້ວ."*

**10** *ກ. ຄົນໂງ່. ຂ. ບໍ່ມີນໍ້າມັນ. ຄ. ເຂົາໄປຊື້ເອົາ. ງ. ເຈົາບ່າວມາແລ້ວ.*
*ຈ. ບໍ່ໄດ້.*

**11** *ກ ແລະ ຂ ຖືກ.*

**12** *ນໍ້າມັນ.*

**13** *ກ. ຈຸດສໍາຄັນ ຂ. ເຮົາຄວນຈະຕຽມຕົວພ້ອມ ຈົນກວ່າບຸດມະນຸດສະເດັດມາອີກ.*

**14** *ກ. ວັນຫຼືໂມງ ຂ. ພະເຢຊູ.*

**15** *ກ. ພະເຢຊູ. ຂ. ການສະເດັດມາຂອງພະເຢຊູ.*

**16** *ຄ ຖືກ.*

**17** *ກ ຖືກ.*

**ຄໍາຕອບ (ຕໍ່):**

**18** *ຕຽມ... ພ້ອມ... ມາ... ມະນຸດ*

**19** *ກ. ນໍ້າມັນ. ຂ. ເອົານໍ້າມັນໄປ.*

**20** *ຂ ຖືກ.*

**21** *ຂາດບໍ່ມີພະວິນຍານບໍລິສຸດ.*

**22** *ກ. ບໍ່ມີພະວິນຍານບໍລິສຸດ. ຂ. ບໍ່ຮັບຮູ້.*

*ຄ. ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າເຮົາບໍ່ຮູ້ຈັກພວກທ່ານ.*

*ງ. ບໍ່ຮັບຮູ້. ຈ. ບໍ່ໄດ້.*

**23** *ກ. ຈົ່ງຕຽມຕົວພ້ອມຢູ່ສະເໝີ. ຂ. ເພາະການສະເດັດມາຂອງພະອົງ (ບຸດມະນຸດ) ມາໃກ້.*

**24** *ຂ ຖືກ.*

**25** *ພະທີ່ນັ່ງ... ກະສັດ... ພະວິນຍານບໍລິສຸດ... ສະເດັດມາ... ພະເຢຊູ... ສະຫວັນ.*

**26** *ບໍ່*

**27** *ບໍ່ຖືກຈັກຂໍ້ (ຜິດໝົດ)*

**28** *ຈົ່ງຕຽມຕົວພ້ອມຢູ່ສະເໝີ ເພາະການສະເດັດມາຂອງພະອົງມາໃກ້.*

**29** *ເຮັບເລີ 9:27*

**30** *ກ. (ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມ)*

*ຂ. (ໃຫ້ແລກປ່ຽນຄວາມຄິດເຫັນໃນປະຊຸມ)*

**31** *ກ. ມັດທາຍ 24:36. ຂ. ເຮັບເລີ 9:27.*

**32** *ກ. ພວກປະໂລຫິດໃຫຍ່ແລະພວກເຖົ້າແກ່ໃນບໍລິເວນພະວິຫານ.*

*ຂ. ນັກທຳແລະພວກຟາລິຊາຍ. ຄ. ເຢລູຊາເລັມ.*

*ງ. ພະວິຫານ (ແລະເຢລູຊາເລັມ) ຈ. ພູໝາກກອກເທດ.*